# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ...ໜ້າ 01-05

II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ....................................................... ໜ້າ 06

III. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ..................................................... ໜ້າ 07-12


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກໍລະກົດ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

**1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 21/7/2023, ທີ່ສໍານັກງານສູນກາງພັກກອມມູນິດຫວຽດນາມ, ສະຫາຍ ຫງວຽນຟູຈ້ອງ ໄດ້ເປັນປະທານກອງປະຊຸມກົມການເມືອງ ແລະ ຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ເພື່ອປະກອບຄໍາເຫັນຕໍ່ບົດລາຍງານສະພາບການພັດທະນາເສດຖະກິດ - ສັງຄົມ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການໄລຍະ 6 ເດືອນທ້າຍປີ 2023, ຊຶ່ງເສດຖະກິດມະຫາພາກຂອງຫວຽດນາມໂດຍລວມມີຄວາມຄົງຕົວ; ຕົວເລກເງິນເຟີ້ໄດ້ຮັບການຄວບຄຸມ; ໜີ້ສາທາລະນະ, ໜີ້ລັດຖະບານ, ລາຍຈ່າຍງົບປະມານລັດ ໄດ້ຮັບການຄວບຄຸມເປັນຢ່າງດີ; ຕົວເລກການຂະຫຍາຍຕົວເສດຖະກິດໃນ 6 ເດືອນຜ່ານມາ ບັນລຸ 3,72%; ວຽກງານປະຕິຮູບ, ບູລະນະບັນດາກົນໄກ, ນະໂຍບາຍກົດໝາຍ, ປະຕິຮູບບັນດາຂັ້ນຕອນເອກະສານຄຸ້ມຄອງບໍລິຫານ, ການລົງທຶນ, ດໍາເນີນທຸລະກິດ ໄດ້ຮັບການຍູ້ແຮງ; ບັນດາໂຄງການຍຸດທະສາດສໍາຄັນຂອງຊາດ ໄດ້ຮັບການຈັດຕັ້ງປະຕິບັດໄປຕາມກໍານົດ.

ລະຫວ່າງວັນທີ 24-28/07/2023, ທ່ານ ຫວໍ ວັນເຖືອງ, ປະທານປະເທດຫວຽດນາມ ໄດ້ຢ້ຽມຢາມ 03 ປະເທດເອີຣົບ (ໂອຕຣິດ, ອິຕາລີ ແລະ ວາຕິກັງ). ໃນການຢ້ຽມຢາມໂອຕຣິດ, ທ່ານ ຫວໍ ວັນເຖືອງ ໄດ້ພົບປະກັບ ທ່ານ Alexander Van der Bellen, ປະທານາທິບໍດີໂອຕຣິດ, ສອງຝ່າຍເຫັນດີສິ່ງເສີມການຮ່ວມມືທາງດ້ານເສດຖະກິດ, ການສຶກສາ ແລະ ວັດທະນະທໍາ; ປະສານສົມທົບຜ່ານກົນໄກສັນຍາການຄ້າເສລີເອີຣົບ-ຫວຽດນາມ (EVFTA). ການຢ້ຽມຢາມອິຕາລີ, ທ່ານ ຫວໍ ວັນເຖືອງ ໄດ້ພົບປະກັບ ທ່ານ Sergio Mattarella, ປະທານາທິບໍດີອິຕາລີ, ສອງຜູ້ນໍາເຫັນດີຍົກລະດັບການພົວພັນສອງປະເທດເປັນການຮ່ວມມືຍຸດທະສາດ ແລະ ປຶກສາຫາລືກັນໃນບັນຫາພາກພື້ນ ແລະ ສາກົນ. ສ່ວນການຢ້ຽມຢາມວາຕິກັງ, ທ່ານ ຫວໍ ວັນເຖືອງ ໄດ້ພົບປະກັບ ສົມເດັດສັນຕະປາປາ Francis (Pope Francis) ແລະ ເຈົ້າຄອງວາຕິກັງ, ຊຶ່ງໄດ້ແລກປ່ຽນວິທີການເສີມຂະຫຍາຍການຮ່ວມມືລະຫວ່າງສອງຝ່າຍໃນຕໍ່ໜ້າ.

ວັນທີ 01/07/2023, ທ່ານ ຫວໍ ວັນເຖືອງ, ປະທານປະເທດຫວຽດນາມ ໄດ້ຕ້ອນຮັບ ທ່ານ Martin Candinas, ປະທານສະພາແຫ່ງຊາດສະວິດ. ທ່ານ ຫວໍ ວັນເຖືອງ ໄດ້ກ່າວວ່າ ສະວິດ ເປັນປະເທດທີ່ມີຄວາມເຂັ້ມແຂງທາງດ້ານການເງິນ, ທະນາຄານ ແລະ ພະລັງງານທົດແທນ. ສະແດງຄວາມຂອບໃຈຕໍ່ລັດຖະບານສະວິດ ທີ່ໄດ້ປະກອບສ່ວນຊຸກຍູ້ທຶນຊ່ວຍເຫຼືອລ້າ (ODA) ໃຫ້ກັບຫວຽດນາມ ໃນໄລຍະຜ່ານມາ ແລະ ໄດ້ສະເໜີໃຫ້ ສະວິດ ຊ່ວຍຊຸກຍູ້ບັນດາປະເທດສະມາຊິກເອີຣົບ ສະໜັບສະໜູນການລົງນາມໃນສັນຍາການຄ້າເສລີຫວຽດນາມ-ເອີຣົບ (EFTA). ສໍາລັບການພົວພັນສອງຝ່າຍ, ສະເໜີໃຫ້ ສະວິດ ເພີ່ມທະວີການຮ່ວມມືໃນບັນດາຂົງເຂດຕ່າງໆ ໂດຍສະເພາະການເມືອງ, ການທູດ, ເສດຖະກິດ, ການຄ້າ, ການລົງທຶນ ແລະ ອື່ນໆ. ທ່ານ Candinas ເຫັນດີຕໍ່ບັນດາຂໍ້ສະເໜີໃນການຂະຫຍາຍສາຍພົວພັນສອງຝ່າຍໃນໄລຍະຍາວ. ຕໍ່ກັບສັນຍາ EFTA ບັນດາພາກສ່ວນທີ່ກ່ຽວຂ້ອງ ໄດ້ສືບຕໍ່ປຶກສາຫາລື ເພື່ອກະກຽມການລົງນາມໃນຂັ້ນຕໍ່ໄປ. ສະວິດ ຈະສືບຕໍ່ເພີ່ມທະວີການພົວພັນຮ່ວມມືກັບຫວຽດນາມ ໂດຍສະເພາະການສຶກສາ, ການຝຶກອົບຮົມວິຊາຊີບ, ເຕັກໂນໂລຊີ, ອຸດສາຫະກໍາ ແລະ ອື່ນໆ.

**2). ພັກກອມມູນິດຈີນ**

ວັນທີ 26/07/2023, ກົມການເມືອງສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມເຊື່ອມຊຶມລວມໝູ່ ຮອບທີ 07 ກ່ຽວກັບການເພີ່ມທະວີການບໍລິຫານດ້ານການທະຫານຢ່າງຮອບດ້ານ. ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກໍາມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ເນັ້ນໜັກໃຫ້ປະຕິບັດບັນດາມະຕິຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ຢ່າງຮອບດ້ານ, ຈັດຕັ້ງປະຕິບັດການກໍ່ສ້າງທະຫານ ໃຫ້ເຂັ້ມແຂງໃນຍຸກສະໄໝໃໝ່, ຍຶດໝັ້ນພັກນໍາພາ ແລະ ປັບປຸງລະບອບການທະຫານທີ່ມີສີສັນຂອງຈີນ, ສ້າງລະບົບບໍລິຫານການທະຫານທີ່ທັນສະໄໝ ແລະ ຮັບປະກັນການບັນລຸເປົ້າໝາຍສູ້ຊົນຮ້ອຍປີ ຂອງການສ້າງຕັ້ງກອງທັບປະຊາຊົນຈີນ.

ວັນທີ 25/07/2023, ຄະນະກໍາມະການປະຈໍາສະພາປະຊາຊົນແຫ່ງຊາດຈີນ ຊຸດທີ 14 ໄດ້ຈັດກອງປະຊຸມ ສະໄໝທີ 04 ຢູ່ ນະຄອນຫຼວງປັກກິ່ງ. ກອງປະຊຸມ ໄດ້ລົງຄະແນນສຽງໃຫ້ ທ່ານ ສິນ ກ່າງ ຢຸດການດໍາລົງຕໍາແໜ່ງລັດຖະມົນຕີ

ຕ່າງປະເທດ ເນື່ອງຈາກບັນຫາສຸຂະພາບ ແລະ ແຕ່ງຕັ້ງ ທ່ານ ຫວັງ ອີ້ ປ່ຽນແທນ; ເຫັນດີໃຫ້ ທ່ານ ຢີ້ ກ່າງ ຢຸດດຳລົງຕຳແໜ່ງຜູ້ວ່າການທະນາຄານປະຊາຊົນຈີນ ແລະ ແຕ່ງຕັ້ງ ທ່ານ ພ່ານ ກົ່ງເຊິ້ງ ປ່ຽນແທນ.

ວັນທີ 04/07/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມອົງການຮ່ວມມືຊຽງໄຮ້ (SCO) ຄັ້ງທີ 23 ຜ່ານວີດີໂອທາງໄກ ປະກອບດ້ວຍ 09 ປະເທດສະມາຊິກ: ຈີນ, ລັດເຊຍ, ອິນເດຍ, ກາຊັກສະຖານ, ກຣູກກິດສະຖານ, ຕັດຈິກິດສະຖານ, ອຸດສະເບກິດສະຖານ, ປາກິດສະຖານ ແລະ ອີຣານ ທີ່ຖືກຮັບຮອງເປັນສະມາຊິກຢ່າງເປັນທາງການ ໃນກອງປະຊຸມຄັ້ງນີ້; ມົງໂກລີ ແລະ ເບລາຣຸດຊີ ກໍໄດ້ເຂົ້າຮ່ວມໃນນາມຜູ້ສັງເກດການ. ໃນກອງປະຊຸມ, ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ 10 ປີ ຜ່ານມາ ໂລກໄດ້ປ່ຽນແປງຢ່າງໄວວາ, ໄດ້ຫັນປ່ຽນຈາກແນວຄິດໄປສູ່ການກະທຳ, ວິໄສທັດໄປສູ່ຄວາມເປັນຈິງ, ອົງການຮ່ວມມືຊຽງໄຮ້ ເປັນໜຶ່ງໃນອົງການແຖວໜ້າໃນການຫັນປ່ຽນແນວຄິດເຫຼົ່ານັ້ນ, ຍຶດໝັ້ນແນວຄວາມຄິດເພື່ອສ້າງປະຊາຄົມ SCO ທີ່ມີອະນາຄົດຮ່ວມກັນ ແລະ ບັນດາປະເທດສະມາຊິກໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ສາກົນ.

**3). ພັກແຮງງານເກົາຫຼີ**

ວັນທີ 16-18/06/2023, ສູນກາງພັກແຮງງານເກົາຫຼີ ໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 8 ສະໄໝທີ VIII ໂດຍການເປັນປະທານ ຂອງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ; ກອງປະຊຸມ ໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດບັນດາແຜນຍຸດທະສາດທີ່ວາງອອກໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 7 ສະໄໝທີ VIII, ໄດ້ປຶກສາຫາລື ແລະ ເອກະພາບກັນຮັບຮອງເອົາ 6 ວາລະສຳຄັນຄື: 1) ການຈັດຕັ້ງປະຕິບັດບັນດານະໂຍບາຍທີ່ສຳຄັນໃນ 6 ເດືອນຕົ້ນປີ 2023; 2) ການກຳນົດມາດຕະການສຳຄັນເພື່ອພັດທະນາການສຶກສາ; 3) ການສົ່ງເສີມບົດບາດຂອງພະນັກງານທຸກຂັ້ນ; 4) ການເສີມຂະຫຍາຍອຳນາດປະຊາຊົນ; 5) ບັນດາມາດຕະການສຳຄັນ ເພື່ອຍູ້ແຮງການສ້າງລະບຽບວິໄນພັກ; 6) ການເລືອກຕັ້ງ ແລະ ປັບປຸງບຸກຄະລາກອນ. ກອງປະຊຸມ ຍັງໄດ້ປຶກສາຫາລືກ່ຽວກັບການພັດທະນາລະບົບດາວທຽມສອດແນມທາງການທະຫານ ເພື່ອຄວາມອາດສາມາດໃນການປົກປ້ອງອະທິປະໄຕຂອງຕົນ.

**4). ພັກກອມມູນິດກູບາ**

ວັນທີ 22 ກໍລະກົດ 2023, ກອງປະຊຸມສະໄໝສາມັນເທື່ອທີ I ຂອງສະພາແຫ່ງຊາດອຳນາດປະຊາຊົນກູບາ ຊຸດທີ X ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ພາຍຫຼັງດຳເນີນມາແຕ່ວັນທີ 20-22 ກໍລະກົດ 2023, ໂດຍການເປັນປະທານຂອງ ສະຫາຍ Esteban Lazo Hernández, ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ. ກອງປະຊຸມ ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ 06 ເດືອນຕົ້ນປີ ແລະ ແຜນການ 06 ເດືອນທ້າຍປີ 2023, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ດ້ວຍການວາງມາດຕະການຕ່າງໆເປັນຕົ້ນແມ່ນຊຸກຍູ້ການຜະລິດພາຍໃນ, ເສີມສ້າງວຽກງານກະສິກຳ-ປູກຝັງລ້ຽງສັດ, ການທ່ອງທ່ຽວ, ການບໍລິການວຽກງານສາທາລະນາສຸກຢູ່ຕ່າງປະເທດ, ຂະແໜງໄຟຟ້າ-ນ້ຳມັນເຊື້ອໄຟ ແລະ ຂະແໜງການອື່ນ ເພື່ອເຮັດໃຫ້ເສດຖະກິດຂະຫຍາຍຕົວ.

ວັນທີ 16 ກໍລະກົດ 2023, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ສ.ກູບາ ໄດ້ພົບປະກັບ ທ່ານ Marcelo Rebelo de Sousa, ປະທານາທິບໍດີປອກຕຸຍການ ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດລະຫວ່າງປະຊາຄົມລັດອາເມລິກາລາຕິນ ແລະ ກາຣິບຽນ (CELAC) ແລະ ສະຫະພາບເອີຣົບ (EU) ຄັ້ງທີ 3 ທີ່ເມືອງບຸກແຊນ, ປະເທດແບນຊິກ ໃນລະຫວ່າງວັນທີ 17-18 ກໍລະກົດ 2023. ທ່ານ Miguel ໄດ້ກ່າວວ່າ ກູບາ ມີຄວາມຍິນດີເພີ່ມທະວີການພົວພັນ ແລະ ຮ່ວມມືກັບປອກຕຸຍການ ເປັນຕົ້ນແມ່ນດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ຂົງເຂດອື່ນໆທີ່ສອງປະເທດມີທ່າແຮງ. ທ່ານ Marcelo Rebelo de Sousa ຍັງໄດ້ສະແດງຄວາມຊົມເຊີຍຕໍ່ການມາຢ້ຽມຢາມປອກຕຸຍການ ຂອງຄະນະຜູ້ແທນຂັ້ນສູງກູບາໃນຄັ້ງນີ້, ຊຶ່ງເປັນຄັ້ງທຳອິດ ໃນຮອບຫຼາຍປີ ຫຼັງຈາກການຢ້ຽມຢາມຄັ້ງສຸດທ້າຍຂອງ ທ່ານ Fidel Castro, ອະດີດເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ໃນປີ 1998.

ວັນທີ 01/07/2023, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ຕ້ອນຮັບ ທ່ານ Luis Alberto Arce, ປະທານາທິບໍດີໂບລີວີ ໃນໂອກາດຢ້ຽມຢາມກູບາ ຢ່າງເປັນທາງການ. ສອງຝ່າຍ ໄດ້ປຶກສາຫາລືຮ່ວມກັນໃນຫຼາຍຂົງເຂດ ເປັນຕົ້ນ: ວຽກງານການທູດ, ກະສິກໍາ ແລະ ການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ. ທ່ານ Miguel ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງໂບລີວີ ໂດຍສະເພາະແມ່ນຊ່ວຍເຫຼືອທາງດ້ານສະບຽງອາຫານ ໃນໄລຍະທີ່ກູບາປະສົບກັບໄພພິບັດຕ່າງໆ. ທ່ານ Luis Alberto Arce ສະແດງຄວາມຊົມເຊີຍຕໍ່ການນໍາພາ-ຊີ້ນໍາ ຂອງພັກກອມມູນິດກູບາ ທີ່ຍາດໄດ້ຜົນສໍາເລັດອັນໃຫຍ່ຫຼວງ. ສອງປະເທດ ຈະຮ່ວມມືກັນພັດທະນາ ເພື່ອນໍາຜົນປະໂຫຍດແກ່ປະຊາຊົນສອງຊາດ ໂບລີວີ-ກູບາ.

**5). ການເລືອກຕັ້ງສະມາຊິກສະພາແຫ່ງຊາດກໍາປູເຈຍ**

ວັນທີ 23/07/2023, ກໍາປູເຈຍ ໄດ້ຈັດການເລືອກຕັ້ງທົ່ວປະເທດ ເພື່ອເລືອກສະມາຊິກສະພາແຫ່ງຊາດ 125 ບ່ອນນັ່ງ, ມີທັງໝົດ 18 ພັກການເມືອງ ທີ່ເຂົ້າຮ່ວມສະໝັກ, ໂດຍມີປະຊາຊົນອອກມາໃຊ້ສິດຕົວຈິງ 8,213,260 ຄົນ ເທົ່າກັບ 84,58% ຂອງຜູ້ມີສິດປ່ອນບັດທັງໝົດ 9,710,655 ຄົນ. ຜົນການເລືອກຕັ້ງ ແມ່ນ ພັກປະຊາຊົນກໍາປູເຈຍ (CPP), ພັກກໍາອໍານາດ ພາຍໃຕ້ການນໍາພາ ຂອງ ທ່ານ ຮຸນເຊນ, ປະທານພັກປະຊາຊົນກໍາປູເຈຍ, ນາຍົກລັດຖະມົນຕີກໍາປູເຈຍ ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 2,076,177 ເທົ່າກັບ 83.22%, ໄດ້ 120 ບ່ອນນັ່ງ (ກວມ 96%) ຈາກທັງໝົດ 125 ບ່ອນນັ່ງໃນສະພາ. ພັກຟູນຊິນເປັກ (FUNCINPEC) ໄດ້ຮັບການສະໜັບສະໜູນຈາກປະຊາຊົນ 209,116 ສຽງ ເທົ່າກັບ 8.38%, ໄດ້ 5 ບ່ອນນັ່ງ. ຫຼາຍປະເທດ ໄດ້ສົ່ງສານສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດຂອງການເລືອກຕັ້ງດັ່ງກ່າວ ໃນນັ້ນ ມີ ສປ ຈີນ, ສສ ຫວຽດນາມ ແລະ ສປປ ລາວ.

**6). ສະພາບການເມືອງແອັດສະປາຍ**

ວັນທີ 23 ກໍລະກົດ 2023, ແອັດສະປາຍ ໄດ້ຈັດການເລືອກຕັ້ງທົ່ວໄປ ເພື່ອເລືອກເອົາສະມາຊິກສະພາຕໍ່າ ຈໍານວນ 350 ບ່ອນນັ່ງ, ສະມາຊິກສະພາສູງ 208 ບ່ອນນັ່ງ. ຜົນການເລືອກຕັ້ງແມ່ນ ພັກປະຊາຊົນແອັດສະປາຍ (PP) ໄດ້ 136 ບ່ອນນັ່ງ; ພັກແຮງງານສັງຄົມນິຍົມ (PSOE) ຂອງ ນາຍົກລັດຖະມົນຕີ Pedro Sánchez ໄດ້ 122 ບ່ອນນັ່ງ; ພັກຂວາຈັດ (VOX) ໄດ້ 33 ບ່ອນນັ່ງ; ພັກຊ້າຍຈັດ (Sumar) ໄດ້ 31 ບ່ອນນັ່ງ, ພັກຊ້າຍກາຕາລັນ Republican Left of Catalonia (ERC) ແລະ ພັກ Together for Catalonia ໄດ້ພັກລະ 07 ບ່ອນນັ່ງ. ພັກ PP ແລະ ພັກ VOX ທີ່ເປັນຕົວແທນຂອງພັກຝ່າຍຂວາ ເມື່ອລວມບ່ອນນັ່ງແລ້ວ ຈະໄດ້ 169 ບ່ອນນັ່ງ, ສ່ວນ ພັກ PSOE ຮ່ວມກັບພັກ Sumar ທີ່ເປັນຕົວແທນຂອງພັກຝ່າຍຊ້າຍ ທີ່ເປັນລັດຖະບານປະຈຸບັນ ໄດ້ 158 ບ່ອນນັ່ງ, ຊຶ່ງບໍ່ພຽງພໍໃນການຈັດຕັ້ງລັດຖະບານ ຈໍາເປັນຕ້ອງແມ່ນພັກການເມືອງອື່ນ ເຂົ້າມາຮ່ວມ ຈຶ່ງສາມາດຈັດຕັ້ງລັດຖະບານຕໍ່ໄປໄດ້.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ**

ໃນໄລຍະເດືອນ ກໍລະກົດ 2023, ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ ມີຫຼາຍເຫດການພົ້ນເດັ່ນ ດັ່ງນີ້:

- **ແຫຼມເກົາຫຼີ**: ວັນທີ 22/07/2023, ສປປ ເກົາຫຼີ ໄດ້ທົດລອງລູກສອນໄຟຫຼາຍລູກ ຕົກລົງທະເລເຫຼືອງ ແລະ ອີກ 02 ລູກ ຕົກລົງທະເລຕາເວັນຕົກ ພາຍຫຼັງເຮືອດໍານໍ້າພະລັງງານນິວເຄຼຍຂອງອາເມລິກາ ເຂົ້າປະຈໍາຢູ່ຖານທັບເຮືອໃນດອນ **Jeju** ຂອງ ສ. ເກົາຫຼີ (ເປັນຄັ້ງທໍາອິດ ນັບແຕ່ຊຸມປີ 1980). ການເຄື່ອນໄຫວຕ່າງໆຂອງ ອາເມລິກາ-ສ. ເກົາຫຼີ ເຮັດໃຫ້ການເຈລະຈາການທູດລະຫວ່າງ ສປປ ເກົາຫຼີ ແລະ ສ. ເກົາຫຼີ ໄດ້ຢຸດຊະງັກ. ຂະນະທີ່, ວັນທີ 27/07/2023 ສປປ ເກົາຫຼີ ໄດ້ຈັດພິທີສະເຫຼີມສະຫຼອງວັນຢຸດຍິງລະຫວ່າງ ສ. ເກົາຫຼີ ແລະ ສປປ ເກົາຫຼີ ຄົບຮອບ 70 ປີ ໂດຍການເຂົ້າຮ່ວມຂອງທ່ານ Kim Jong Un, ຜູ້ນໍາສູງສຸດ ສປປ ເກົາຫຼີ; ມີຄະນະຜູ້ແທນຂັ້ນສູງຈາກລັດເຊຍ ນໍາໂດຍ ທ່ານ Sergey Shoigu, ລັດຖະມົນຕີປ້ອງກັນປະເທດລັດເຊຍ; ຈາກ ສປ ຈີນ ນໍາໂດຍທ່ານ Li Hongzhong, ຮອງປະທານຜູ້ທີໜຶ່ງຂອງຄະນະປະຈໍາສະພາແຫ່ງຊາດຈີນ ເຂົ້າຮ່ວມ ແລະ ນາຍົກລັດຖະມົນຕີຍີ່ປຸ່ນ ໄປຢ້ຽມຢາມ ສປປ ເກົາຫຼີ ພາຍຫຼັງການລະບາດຂອງພະຍາດໂຄວິດ-19 ເປັນຕົ້ນມາ.

-ວັນທີ 03/07/2023, ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ຊຸກຍູ້ໃຫ້ລັດຖະສະພາຍີ່ປຸ່ນ ຮັບຮອງຍັດຕິວ່າດ້ວຍມາດຕະການພິເສດໃຫ້ເພີ່ມກໍາລັງປ້ອງກັນຕົນເອງ, ການຮັບຮອງເອົາຍັດຕິສະບັບດັ່ງກ່າວ ຈະເຮັດໃຫ້ງົບປະມານໃນວຽກງານປ້ອງກັນປະເທດຂອງຍີ່ປຸ່ນ ເພີ່ມສູງຂຶ້ນເປັນ 43.000 ຕື້ເຢັນ ກວມເອົາ 60% ຂອງ GDP ທັງໝົດ ໃນ 05 ປີຕໍ່ໜ້າ, ຊຶ່ງເປັນປະເທດທີ່ມີການນໍາໃຊ້ງົບປະມານທາງການທະຫານຫຼາຍທີ່ສຸດ ເປັນອັນດັບ 03 ຂອງໂລກ ຖັດຈາກ ອາເມລິກາ ແລະ ຈີນ. ຂະນະທີ່, ທ່ານ ຫວັງ ອີ້, ຫົວໜ້າຫ້ອງການຄະນະກໍາມະການວຽກງານການຕ່າງປະເທດຂອງພັກກອມມູນິດຈີນ, ລັດຖະມົນຕີຕ່າງປະເທດ ສປ ຈີນ ໄດ້ສະເໜີໃຫ້ມີການຟື້ນຟູການຮ່ວມມື 03 ຝ່າຍ (ຈີນ, ຍີ່ປຸ່ນ ແລະ ສ.ເກົາຫຼີ), ຊຶ່ງເປັນແນວທາງໃນການຮັກສາສັນຕິພາບ, ສະຖຽນລະພາບໃນພາກພື້ນ ແລະ ຕໍ່ຕ້ານແນວຄິດສົງຄາມເຢັນ.

-ພາຍຫຼັງການເລືອກຕັ້ງທົ່ວໄປຂອງໄທ ໃນວັນທີ 14/05/2023, ຜູ້ແທນລາຊະດອນຂອງໄທ ໄດ້ເປີດກອງປະຊຸມໃນວັນທີ 04/07/2023 ເລືອກເອົາ ທ່ານ ວັນມູຫະມັດ ນໍມະທາ, ຫົວໜ້າພັກປະຊາຊາດ ເປັນປະທານສະພາຜູ້ແທນລາຊະດອນ; ໄດ້ມີກອງປະຊຸມສະພາອີກ 02 ຄັ້ງ ໃນວັນທີ 14/07/2023 ແລະ ວັນທີ 19/07/2023 ຜ່ານມາ ແຕ່ບໍ່ສາມາດເລືອກນາຍົກລັດຖະມົນຕີໄດ້, ຍ້ອນ ທ່ານ ພິທາ ລິ້ມຈະເລີນລັດ, ຫົວໜ້າພັກກ້າວໄກ ຖືກສານລັດຖະທໍາມະນູນສັ່ງໃຫ້ໂຈະການປະຕິບັດໜ້າທີ່ ສສ ຊົ່ວຄາວ ເນື່ອງຈາກຄະດີການຖືຫຸ້ນສື່. ຍ້ອນແນວນັ້ນ, ພັກກ້າວໄກ ຈຶ່ງຖະແຫຼງເຫັນດີໃຫ້ ພັກເພື່ອໄທ ທີ່ມີ ສ.ສ ເປັນອັນດັບ 02 ຮອງຈາກພັກກ້າວໄກ ເປັນແກນນໍາໃນການຈັດຕັ້ງລັດຖະບານແທນ. ຫຼັງຈາກນັ້ນ, ພັກເພື່ອໄທ ໄດ້ເລີ່ມຂະບວນການດັ່ງກ່າວ, ພົບປະປຶກສາຫາລືກັບຫຼາຍພັກການເມືອງ ແລະ ສະມາຊິກສະພາສູງ (ສວ). ມາເຖິງປັດຈຸບັນ, ພັກເພື່ອໄທ ໄດ້ຕົກລົງຮ່ວມກັບອີກ 11 ພັກ ທີ່ມີຈໍານວນ 315 ບ່ອນນັ່ງ ເພື່ອຮ່ວມກັນຈັດຕັ້ງລັດຖະບານ.

**2). ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

- ການຕໍ່ສູ້ລະຫວ່າງອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ, ອູແກຣນ ໄດ້ໃຊ້ໂດຣນ ໂຈມຕີຂົວເຄີດ (Kerch) ຢູ່ແຫຼມໄຄຣເມຍ ໃນວັນທີ 17/07/2023 ເຮັດໃຫ້ນັກຂ່າວລັດເຊຍເສຍຊີວິດ ແລະ ບາດເຈັບຫຼາຍຄົນ ແລະ ໄດ້ໂຈມຕີນະຄອນຫຼວງມົດສະກູຂອງລັດເຊຍ ໃນວັນທີ 24/07/2023 ຜ່ານມາ, ລັດເຊຍກໍໄດ້ຕອບໂຕ້ຄືນ ໃສ່ນະຄອນຫຼວງຂຽບຂອງອູແກຣນ ແລະ ເມືອງ Odessa ທາງພາກຕາເວັນຕົກສ່ຽງເໜືອຂອງທະເລດໍາ (ເມືອງໃຫຍ່ອັນດັບ 03 ຂອງອູແກຣນ); ລັດເຊຍ ສາມາດຍຶດ 04 ເມືອງທາງພາກຕາເວັນອອກຂອງອູແກຣນ ໄດ້ຢ່າງສົມບູນ. ລັດເຊຍ ຍັງປະກາດ ບໍ່ຕໍ່ສັນຍາການສົ່ງອອກຜົດພັນທັນຍາຫານຜ່ານທະເລດໍາ ກັບ ອູແກຣນ ທີ່ໝົດສັນຍາ ແຕ່ວັນທີ 17/07/2023 ເປັນຕົ້ນມາ ເນື່ອງຈາກອູແກຣນ ແລະ ຕາເວັນຕົກ ບໍ່ປະຕິບັດຕາມການສະເໜີຂອງລັດເຊຍ ໃນໄລຍະຜ່ານມາ. ປັດຈຸບັນ, ລັດເຊຍ ກໍາລັງເກັບກໍາຂໍ້ມູນກ່ຽວກັບການໂຈມຕີດ້ວຍລະເບີດລູກຫວ່ານ ທີ່ໄດ້ຮັບການຊ່ວຍເຫຼືອຈາກອາເມລິກາ ທີ່ອູແກຣນໃຊ້ໂຈມຕີ ໃນພາກພື້ນ Zaporozhye ແລະ ຈະຕອບໂຕ້ໃນແບບດຽວກັນ.

ວັນທີ 24/7/2023, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ແລະ ທ່ານ Alexander Lukachenko, ປະທານາທິບໍດີເບຣາລຸດຊີ ໄດ້ພົບປະກັນຢູ່ ນະຄອນ St. Petersburg ເພື່ອປຶກສາຫາລືກ່ຽວກັບການລີ້ໄພຂອງກຸ່ມທະຫານຮັບຈ້າງ Wagner ໃນເບລາລຸດຊີ ແລະ ການເພີ່ມກໍາລັງທະຫານຂອງໂປໂລຍ (ນາໂຕ້) ປະມານ 1,000 ຄົນ ທີ່ເຄື່ອນກໍາລັງໄປປະຈໍາຢູ່ຊາຍແດນທີ່ຕິດກັບເບຣາລຸດຊີ ໃນຕົ້ນເດືອນກໍລະກົດ 2023 ທີ່ຜ່ານມາ ເພື່ອຫາວິທີທາງປ້ອງກັນຮ່ວມກັນ. ສ່ວນຕາເວັນຕົກ ຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ, ໃນນັ້ນ, ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນໍານາໂຕ້ ຢູ່ ລິດຕົວນີ ຂອງທ່ານ Yoon Suk-Yeol, ປະທານາທິບໍດີ ສ.ເກົາຫຼີ ໄດ້ປະກາດຊ່ວຍເຫຼືອອູແກຣນ ຕື່ມອີກ 150 ລ້ານໂດລາ ຊຶ່ງກ່ອນໜ້ານີ້ ກໍໄດ້ຊ່ວຍເຫຼືອດ້ານທະຫານ, ມະນຸດສະທໍາຕ່າງໆ 100 ລ້ານໂດລາ. ບູນກາລີ ໄດ້ຈັດຕັ້ງການຊ່ວຍເຫຼືອຊຸດທໍາອິດໃຫ້ອູແກຣນ ໃນນັ້ນມີລົດຫຸ້ມເກາະ 100 ກວ່າຄັນ.

-**ສະພາບການ ຢູ່ຝຣັ່ງ**: ພາຍຫຼັງເຫດການຕໍາຫຼວດ ໄດ້ຍິງ ທ້າວ Nahel Merzouk ອາຍຸ 17 ປີ, ສັນຊາດຝຣັ່ງ, ເຊື້ອສາຍມາຣົກ-ອານເຊລີ ເສຍຊີວິດ ຢູ່ ເຂດຊານເມືອງນະຄອນຫຼວງປາຣີ ໃນວັນທີ 27/06/2023 ຜ່ານມາ, ໄດ້ເຮັດໃຫ້ປະຊາຊົນຈໍານວນຫຼາຍບໍ່ພໍໃຈອອກມາເດີນປະທ້ວງກໍ່ການຈາລະຈົນ, ຈູດເຜົາລົດ, ທໍາລາຍລະບົບຂົນສົ່ງສາທາລະນະ, ປຸ້ນຮ້ານຄ້າ, ບຸກເຂົ້າຫ້ອງການປົກຄອງຂອງບັນດາເມືອງ ແລະ ອາຄານຂອງລັດ ໃນຂອບເຂດທົ່ວປະເທດ. ນັບແຕ່ເຫດການເກີດຂຶ້ນເຖິງວັນທີ 01/07/2023, ເຈົ້າໜ້າທີ່ສາມາດຈັບກຸມຜູ້ກໍ່ການຈາລະຈົນໄດ້ 2,700 ກວ່າຄົນ, ລັດຖະບານ ໄດ້ຈັດ

ສັນຕຳຫຼວດ 45,000 ຄົນ ປະຈຳຢູ່ທົ່ວປະເທດ ເພື່ອຮັບມືກັບສະຖານະການທີ່ເກີດຂຶ້ນ. ນັກວິເຄາະຈຳນວນໜຶ່ງໄດ້ຕີລາຄາວ່າ ບັນຫາທີ່ເກີດຂຶ້ນແມ່ນເນື່ອງມາຈາກຫຼາຍບັນຫາທີ່ສະສົມມາເປັນເວລາດົນນານ ເປັນຕົ້ນ ບັນຫາການຈຳແນກເຊື້ອຊາດ, ຊົນຊັ້ນ ແລະ ການເລືອກປະຕິບັດ ຂອງຕຳຫຼວດຝຣັ່ງ ລວມທັງບັນຫາເສດຖະກິດພາຍໃນຂອງຝຣັ່ງ.

**3). ກອງປະຊຸມນາໂຕ້**

ໃນວັນທີ 11-12 ກໍລະກົດ 2023, ໃນກອງປະຊຸມສຸດຍອດຂອງບັນດາຜູ້ນຳປະເທດສະມາຊິກອົງການນາໂຕ້ ຢູ່ນະຄອນຫຼວງວິນນິອຸສ, ປະເທດລິດຕົວນີ, ອູແກຣນ ບໍ່ໄດ້ຖືກຮັບຮອງເຂົ້າເປັນສະມາຊິກຂອງອົງການນາໂຕ້ ຄືກັບຊູແອດ ຍ້ອນອູແກຣນ ຍັງບໍ່ທັນມີຄວາມພ້ອມ, ທັງບໍ່ມີການກຳນົດກອບເວລາທີ່ຊັດເຈນໃນການດຳເນີນການໃດໆ, ຊຶ່ງເຮັດໃຫ້ຜູ້ນຳອູແກຣນ ບໍ່ພໍໃຈຢ່າງຮຸນແຮງ. ແນວໃດກໍຕາມ, ກອງປະຊຸມ ໄດ້ເຫັນດີສ້າງຕັ້ງສະພາປະສານງານລະຫວ່າງນາໂຕ້ ແລະ ອູແກຣນ, ເອີ້ນວ່າ ສະພານາໂຕ້-ອູແກຣນ, ຊຶ່ງເປັນກົນໄກຕິດຕໍ່ສື່ສານລະຫວ່າງສະມາຊິກນາໂຕກັບອູແກຣນ ໃນກໍລະນີເກີດວິກິດການ ຫຼື ມີເຫດການສຸກເສີນໃດໜຶ່ງເກີດຂຶ້ນ.

**4). ສະພາບການ ໃນຂົງເຂດຕາເວັນອອກກາງ**

- ການໂຈມຕີປາແລັດສະຕິນຂອງ ອິດສະລາແອນ ນັບມື້ທະວີຄວາມຮຸນແຮງ, ໃນວັນທີ 03/07/2023 ກອງທັບອິດສະຣາແອນ ໄດ້ນຳໃຊ້ລົດຖັງຫຼາຍສິບຄັນ, ໂດຣນ ແລະ ເຮືອບິນ ໂຈມຕີເມືອງ Jenin ໃນເຂດ West Bank ເພື່ອປິດລ້ອມຄ້າຍຜູ້ພະຍົບຂອງປາແລັດສະຕິນ ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 13 ຄົນ, ບາດເຈັບຫຼາຍກວ່າ 150 ຄົນ (ເປັນການໂຈມຕີທີ່ຮຸນແຮງທີ່ສຸດນັບຕັ້ງແຕ່ປີ 2002 ເປັນຕົ້ນມາ). ທາງການປາແລັດສະຕິນ ໄດ້ປະນາມການກະທຳດັ່ງກ່າວວ່າເປັນອາຊະຍາກຳສົງຄາມ. ອິດສະຣາແອນ ຍັງໄດ້ຂັດຂວາງບໍ່ໃຫ້ແພດໝໍ ເຂົ້າໄປໃນຄ້າຍຜູ້ອົບພະຍົບ ເພື່ອນຳເອົາຜູ້ບາດເຈັບສົ່ງໂຮງໝໍ. ເລຂາທິການອົງການສັນນິບາດອາຣັບ ໄດ້ປະນາມຕໍ່ການໂຈມຕີດັ່ງກ່າວ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກໃຫ້ການຊ່ວຍເຫຼືອ ແລະ ຫາວິທີທາງແກ້ໄຂບໍ່ໃຫ້ມີການກະທຳຮ້າຍແຮງດັ່ງກ່າວເກີດຂຶ້ນອີກໃນຕໍ່ໜ້າ. ບໍ່ພຽງເທົ່ານັ້ນ ອິດສະລາແອນ ຍັງໄດ້ອະນຸມັດຊື້ເຮືອບິນສູ້ຮົບ F-35 ຈຳນວນ 25 ລຳ ຈາກອາເມລິກາ ເປັນມູນຄ່າ 3 ຕື້ໂດລາ. ໃນເດືອນ 06/2023 ຜ່ານມາ, ອິດສະລາແອນ ໄດ້ອະນຸມັດໃຫ້ຕັ້ງຖິ່ນຖານຂອງຊາວອິດສະລາແອນ 4,500 ຫຼັງ ໃນເຂດ West Bank ທີ່ມີຄວາມຂັດແຍ່ງຢູ່ ເຖິງແມ່ນວ່າມີການຄັດຄ້ານຈາກອັງກິດ, ການາດາ, ອົດສະຕຣາລີ ແລະ ຫຼາຍປະເທດໃນພາກພື້ນກໍຕາມ.

- ວັນທີ 17/07/2023, ທ່ານ Mohammed Shia al-Sudani, ນາຍົກລັດຖະມົນຕີອີຣັກ ໄດ້ຢ້ຽມຢາມຊີຣີເປັນຄັ້ງທຳອິດ ນັບຕັ້ງແຕ່ສົງຄາມກາງເມືອງຊີຣີ ແຕ່ປີ 2011 ເປັນຕົ້ນມາ, ໂດຍໄດ້ພົບປະກັບ ທ່ານ Bashar al-Assad, ປະທານາທິບໍດີຊີຣີ. ສອງຝ່າຍ ໄດ້ປຶກສາຫາລືຫຼາຍບັນຫາໂດຍສະເພາະການຮ່ວມມືທາງດ້ານການຕ້ານການກໍ່ການຮ້າຍ, ພາສີ ແລະ ການແກ້ໄຂບັນຫາຊາຍແດນ ທີ່ມີຮ່ວມກັນປະມານ 600 ກິໂລແມັດ. ພ້ອມນີ້, ທ່ານ Assad ກ່າວສະແດງຄວາມຂອບໃຈວ່າ ຕະຫຼອດໄລຍະຜ່ານມາລັດຖະບານອີຣັກ ໄດ້ປະກອບສ່ວນສຳຄັນໃນການສະໜັບສະໜູນການກັບເຂົ້າເປັນສະມາຊິກສັນນິບາດອາຣັບ (Arab League) ຂອງຊີຣີ ແລະ ຫວັງວ່າ ສອງຝ່າຍ ຈະຮ່ວມກັນແກ້ໄຂບັນຫາທາງດ້ານເສດຖະກິດຮ່ວມກັນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ

1. **ສະຫາຍ ທອງລຸນ ສີສຸລິດ ສົ່ງໂທລະເລກຊົມເຊີຍ ເຖິງ ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ**

ໃນວັນທີ 25 ກໍລະກົດ 2023, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກຊົມເຊີຍ ເຖິງ ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ, ປະທານພັກປະຊາຊົນກຳປູເຈຍໃນໂອກາດທີ່ ພັກປະຊາຊົນກຳປູເຈຍ ໄດ້ຮັບໄຊຊະນະໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ່ VII ຄັ້ງວັນທີ 23 ກໍລະກົດ 2023 ຜ່ານມາ, ຊຶ່ງມີເນື້ອໃນບາງຕອນວ່າ: ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ແລະ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈມາຍັງສົມເດັດ ແລະ ຜ່ານສົມເດັດໄປຍັງຄະນະບໍລິຫານງານສູນກາງພັກປະຊາຊົນ ກຳປູເຈຍ, ລັດຖະບານ ແລະ ປະຊາຊົນກຳປູເຈຍ ຕໍ່ຜົນສຳເລັດອັນຈົບງາມ ໃນການຈັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດດັ່ງກ່າວ. ໄຊຊະນະອັນຍິ່ງໃຫຍ່ຂອງພັກປະຊາຊົນກຳປູເຈຍໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດຄັ້ງນີ້ ອີກເທື່ອໜຶ່ງ ໄດ້ເປັນສິ່ງຢັ້ງຢືນໃຫ້ເຫັນເຖິງບົດບາດຂອງພັກປະຊາຊົນກຳປູເຈຍອັນມີສົມເດັດ ເປັນຜູ້ນຳພາ, ພ້ອມກັນນັ້ນ, ກໍສະແດງໃຫ້ເຫັນຄວາມເຊື່ອໝັ້ນ, ໄວ້ວາງໃຈ ແລະ ສະໜັບສະໜູນຈາກປະຊາຊົນ ກຳປູເຈຍ ທີ່ມີຕໍ່ພັກປະຊາຊົນ ກຳປູເຈຍ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງພັກປະຊາຊົນກຳປູເຈຍອັນມີ ສົມເດັດ ອັກຄະມາຫາ ເສນາບໍດີ ເຕໂຈ ຮຸນແຊນ ເປັນຜູ້ນຳນັ້ນ, ພັກປະຊາຊົນກຳປູເຈຍຈະສືບຕໍ່ນຳພາປະຊາຊົນ ກຳປູເຈຍ ອ້າຍນ້ອງ ຍາດໄດ້ຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດແຫ່ງການສ້າງສາພັດທະນາປະເທດ ກ້າວໄປສູ່ຄວາມຈະເລີນຮຸ່ງເຮືອງ, ຊີວິດການເປັນຢູ່ຂອງປະຊາຊົນ ນັບມື້ນັບໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ແລະ ບົດບາດ ຂອງຣາຊະອານາຈັກກຳປູເຈຍ ຈະນັບມື້ນັບສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ; ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນກຳປູເຈຍ ແລະ ການເປັນຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງ ຍາວນານ ລະຫວ່າງ ລາວ-ກຳປູເຈຍ ຈະສືບຕໍ່ໄດ້ຮັບການເພີ່ມທະວີ ແລະ ເສີມຂະຫຍາຍເຂົ້າສູ່ລວງເລິກ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ກໍຄື ເພື່ອສັນຕິພາບ, ມິດຕະພາບ, ການຮ່ວມມືແລະ ການພັດທະນາໃນພາກພື້ນ ແລະ ໃນໂລກ.

2. **ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງໂທລະເລກຊົມເຊີຍ ເຖິງ ຄະນະບໍລິຫານງານສູນກາງພັກປະຊາຊົນກຳປູເຈຍ**

ວັນທີ 25 ກໍລະກົດ 2023, ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ສົ່ງໂທລະເລກຊົມເຊີຍ ເຖິງ ຄະນະບໍລິຫານງານພັກປະຊາຊົນກຳປູເຈຍ ໃນໂອກາດທີ່ພັກໄດ້ຮັບໄຊຊະນະໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ່ VII ຄັ້ງວັນທີ 23 ກໍລະກົດ 2023 ໂດຍມີເນື້ອໃນວ່າ: ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈມາຍັງ ຄະນະບໍລິຫານງານສູນກາງພັກປະຊາຊົນກຳປູເຈຍ ທີ່ໄດ້ຮັບໄຊຊະນະໃນການເລືອກຕັ້ງໃນຄັ້ງນີ້, ຊຶ່ງເປັນເຫດການການເມືອງທີ່ສຳຄັນຂອງພັກ, ສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນ, ໄວ້ວາງໃຈ ແລະ ການສະໜັບສະໜູນຈາກປະຊາຊົນກຳປູເຈຍ ທີ່ມີຕໍ່ພັກປະຊາຊົນກຳປູເຈຍ ໃນການນຳພາພາລະກິດສ້າງສາປະເທດຊາດອັນໄດ້ເຮັດໃຫ້ເສດຖະກິດຂອງປະເທດ ນັບມື້ນັບໄດ້ຮັບການຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນ ນັບມື້ນັບໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ ແລະ ເຮັດໃຫ້ບົດບາດຂອງ ຣາຊະອານາຈັກກຳປູເຈຍ ນັບມື້ໄດ້ຮັບການຍົກສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ; ພວກຂ້າພະເຈົ້າເຊື່ອໝັ້ນວ່າ, ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນກຳປູເຈຍ ອັນມີ ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ເປັນຜູ້ນຳນັ້ນ, ພັກປະຊາຊົນກຳປູເຈຍ ຈະສືບຕໍ່ນຳພາປະຊາຊົນກຳປູເຈຍ ອ້າຍນ້ອງ ຍາດໄດ້ຜົນສຳເລັດອັນໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດການສ້າງສາ ແລະ ພັດທະນາປະເທດ ໄປສູ່ຄວາມຈະເລີນຮຸ່ງເຮືອງ; ຫວັງຢ່າງຍິ່ງວ່າສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນກຳປູເຈຍ ກໍຄື ລະຫວ່າງ ປະຊາຊົນສອງຊາດ ລາວ-ກຳປູເຈຍ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ.

### 3. ຄະນະຜູ້ແທນພັກເສລີປະຊາທິປະໄຕຍີ່ປຸ່ນ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ



ວັນທີ 12 ກໍລະກົດ 2023 ທີ່ ສໍານັກງານ ຫ້ອງວ່າການສູນກາງພັກ, ພະນະທ່ານ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຮາງິອຸດະ ໂຄອິຈິ (Mr. HAGIUDA Koichi), ປະທານກໍາມາທິການຄົ້ນຄວ້ານະໂຍບາຍຂອງ ພັກເສລີປະຊາທິປະໄຕ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງ ວັນທີ 11-12 ກໍລະກົດ 2023. ພະນະທ່ານ ບຸນທອງ ຈິດມະນີ ໄດ້ແຈ້ງສະພາບການພົ້ນເດັ່ນພາຍໃນພັກ, ພາຍໃນປະເທດ ກໍຄື ຜົນສໍາເລັດໃນການສ້າງສາພັດທະນາເສດຖະກິດ-ສັງຄົມ, ການສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຜົນສໍາເລັດໃນດ້ານຕ່າງໆທີ່ຍາດມາໄດ້ ພາຍໃຕ້ການນໍາພາຂອງພັກ-ລັດຖະບານລາວ ໃຫ້ຝ່າຍຍີ່ປຸ່ນຊາບ, ພ້ອມທັງ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ກໍຄື ປັດຈຸບັນ; ສະແດງຄວາມຂອບໃຈ ຕໍ່ ພັກ ແລະ ລັດຖະບານຍີ່ປຸ່ນ ທີ່ໃຫ້ການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືສອງຝ່າຍ ໃນການພັດທະນາພື້ນຖານໂຄງລ່າງ, ສາທາລະນະສຸກ, ສຶກສາ, ການຄ້າ-ການລົງທຶນ, ວັດທະນະທໍາ ແລະ ອື່ນໆ, ລວມທັງ ການຊ່ວຍເຫຼືອຢາວັກແຊັງ ແລະ ອຸປະກອນການແພດ ໃນການສະກັດກັ້ນ ແລະ ປ້ອງກັນພະຍາດໂຄວິດ-19 ໃຫ້ແກ່ ສປປ ລາວ; ຍິນດີຮ່ວມກັບຝ່າຍຍີ່ປຸ່ນ ໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ພັກ ປປ ລາວ ແລະ ພັກເສລີປະຊາທິປະໄຕ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ລາວ-ຍີ່ປຸ່ນ ໃຫ້ແຕກດອກອອກຜົນ ແລະ ນໍາເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ໃຫ້ນັບມື້ນັບຫຼາຍຂຶ້ນ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ຄຕພ ສະໄໝທີ II




ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ຄະນະພົວພັນຕ່າງປະເທດສູນກາງພັກ ສະໄໝທີ II ໄດ້ຈັດຂຶ້ນຢ່າງເປັນທາງການ ໃນວັນທີ 10 ກໍລະກົດ 2023 ທີ່ຫ້ອງປະຊຸມຄະນະພົວພັນຕ່າງປະເທດສູນກາງພັກ ໂດຍເປັນກຽດເຂົ້າຮ່ວມຂອງ ສະຫາຍ ທອງສະລິດ ມັງໜໍ່ເມກ, ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ; ມີສະຫາຍເລຂາ, ຮອງເລຂາ, ບັນດາສະຫາຍຄະນະບໍລິຫານງານພັກ, ບັນດາໜ່ວຍພັກ, 3 ອົງການຈັດຕັ້ງມະຫາຊົນອ້ອມຂ້າງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ກ່າວເປີດກອງປະຊຸມ ໂດຍໄດ້ເນັ້ນວ່າ: ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໃນຄັ້ງນີ້ ແມ່ນເຫດການໆເມືອງທີ່ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ທັງແມ່ນຄວາມຈຳເປັນພາວະວິໄສ ແລະ ຄວາມຮຽກຮ້ອງຕ້ອງການ ເພື່ອພ້ອມກັນສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງອົງຄະນະພັກຄະນະພົວພັນຕ່າງປະເທດສູນກາງພັກ ຕະຫຼອດໄລຍະກາງສະໄໝທີ່ຜ່ານມາ, ຕິດພັນກັບການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ຍົກໃຫ້ເຫັນດ້ານດີ-ຜົນງານ, ດ້ານອ່ອນ-ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນ ທີ່ຖອດຖອນໄດ້ ພ້ອມທັງຄົ້ນຄວ້າກຳນົດທິດທາງແຜນການ ໃນທ້າຍສະໄໝ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ການເມືອງ ມີປະສິດທິພາບ ແລະ ປະສິດທິຜົນ, ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. ພ້ອມດຽວກັນນັ້ນ, ກໍໄດ້ທາບທາມຄວາມໄວ້ວາງໃຈຕໍ່ການນຳພາລວມ ຂອງຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຕໍ່ບຸກ ຄົນໃນຄະນະບໍລິຫານງານພັກ ເພື່ອເປັນການກວດກາຄືນຄວາມຮັບຜິດຊອບໜ້າທີ່ການເມືອງ, ເສີມຂະຫຍາຍດ້ານຕັ້ງໜ້າ ແລະ ປັບປຸງແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງ ເພື່ອຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງຄະນະບໍລິຫານງານພັກໃຫ້ດີຂຶ້ນ.

ໃນໂອກາດດັ່ງກ່າວ ສະຫາຍ ທອງສະລິດ ມັງໜໍ່ເມກ, ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ໄດ້ມີຄຳເຫັນຊີ້ນຳ ໃຫ້ບັນດາຜູ້ແທນກອງປະຊຸມ ຈົ່ງເຊີດຊູຄວາມຮັບຜິດຊອບຂອງຕົນ ເຂົ້າໃນການທາບທາມຄວາມເຊື່ອໝັ້ນໄວ້ວາງໃຈຕໍ່ການນໍາພາລວມ ແລະ ບຸກຄົນໃນຄະນະບໍລິຫານງານພັກ ຢ່າງພາວະວິໄສ, ຖືກຕ້ອງຕາມຄວາມເປັນຈິງ, ຢຶດໝັ້ນຕາມຫຼັກການ, ກົດລະບຽບ ແລະ ທັດສະນະຂອງພັກຢ່າງຖືກຕ້ອງ; ສະຫາຍ ຍັງໄດ້ເນັ້ນໜັກໃຫ້ແຕ່ບັນດາສະຫາຍ ໃນຄະນະບໍລິຫານງານພັກຄະນະພົວພັນຕ່າງປະເທດສູນກາງພັກ ຈົ່ງໄດ້ຍົກສູງຄວາມຮັບຜິດຊອບ ໃນການສືບຕໍ່ເອົາໃຈໃສ່ນໍາພາ-ຊີ້ນໍາ ແລະ ຈັດຕັ້ງປະຕິບັດວຽກງານໃຫ້ມີການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ຕາມຈິດໃຈຊີ້ນໍາຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.

**2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກຕ້ອນຮັບການເຂົ້າຢ້ຽມອໍາລາຂອງ ເອກອັກຄະລັດຖະທູດ ສປ ຈີນ**



ວັນທີ 25 ກໍລະກົດ 2023, ທີ່ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອໍາລາຂອງສະຫາຍ ຈ່ຽງ ຈ້າຍຕົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສປ ຈີນ ປະຈໍາ ສປປ ລາວ ເນື່ອງໃນໂອກາດທີ່ສໍາເລັດໜ້າທີ່ການທູດ ຢູ່ ສປປ ລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານຂອງ ສະຫາຍ ຈ່ຽງ ຈ້າຍຕົງ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ກໍຄື ການສ້າງຄູ່ຮ່ວມຊະຕາກໍາ ລາວ-ຈີນ ທີ່ນັບມື້ນັບກ້າວເຂົ້າສູ່ລວງເລິກ, ເຊິ່ງຕະຫຼອດໄລຍະການປະຕິບັດໜ້າທີ່ການທູດຂອງສະຫາຍ ຈ່ຽງ ຈ້າຍຕົງ, ສະຫາຍ ໄດ້ມີການປະກອບສ່ວນອັນສໍາຄັນໃນການຊຸກຍູ້ໃຫ້ແກ່ການພົວພັນຮ່ວມມືໃນລະດັບຕ່າງໆ ແລະ ການແລກປ່ຽນຄະນະຜູ້ແທນຂັ້ນສູງ ຂອງ ສອງພັກ, ສອງລັດ ລາວ-ຈີນ ຢ່າງເປັນປົກກະຕິ, ໄດ້ເປັນຂົວຕໍ່ສໍາຄັນຂອງການຈັດຕັ້ງປະຕິບັດບັນດາທິດຊີ້ນໍາທີ່ການນໍາຂັ້ນສູງຂອງສອງພັກ ໄດ້ເຫັນດີເປັນເອກະພາບກັນ ກ່ຽວກັບ ທິດທາງການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ໃນແຕ່ລະໄລຍະ ຢ່າງມີຜົນສໍາເລັດ, ທັງໄດ້ໃຫ້ການຊຸກຍູ້ ແລະ ອໍານວຍຄວາມສະດວກໃຫ້ແກ່ບັນດາອົງການອ້ອມຂ້າງສູນກາງພັກ ຂອງສອງພັກ ລາວ-ຈີນ ໄດ້ມີການໄປມາຫາສູ່, ແລກປ່ຽນ-ຖອດຖອນບົດຮຽນນໍາກັນເປັນປົກກະຕິ ແລະ ນັບມື້ນັບເລິກເຊິ່ງກວ່າເກົ່າ.

### 3. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບ ເອກອັກຄະລັດຖະທູດ ສ.ອາເມລິກາ ເຂົ້າຢ້ຽມອຳລາ



ວັນທີ 17 ກໍລະກົດ 2023, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາ ຂອງ ທ່ານ ປີເຕີ ເຮມອນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສະຫະລັດ ອາເມລິກາ ປະຈຳ ສປປ ລາວ, ໃນໂອກາດທີ່ສຳເລັດການປະຕິບັດໜ້າທີ່ທາງການທູດຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຊົມເຊີຍ ຕໍ່ຜົນສຳເລັດ ໃນການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ຕະຫຼອດໄລຍະຜ່ານມາ ໂດຍໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການ ຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງ ສອງປະເທດ ລາວ-ອາເມລິກາ ໃຫ້ນັບມື້ນັບດີຂຶ້ນເລື້ອຍໆ; ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງ ລັດຖະບານ ແລະ ປະຊາຊົນອາເມລິກາ ທີ່ມີຕໍ່ ສປປ ລາວ ໃນໄລຍະຜ່ານ ມາ ໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ, ເປັນຕົ້ນ: ການລະດົມທຶນ ເພື່ອສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມຢູ່ ສປປ ລາວ, ສະໜອງທຶນໃຫ້ແກ່ວຽກງານສະກັດກັ້ນຢາເສບຕິດ ແລະ ການພັດທະນາການບັງຄັບໃຊ້ກົດໝາຍ, ການເກັບກູ້ລະເບີດບໍ່ທັນແຕກ ໃນ ສປປ ລາວ, ວຽກງານສາທາລະນະສຸກ, ການສຶກສາ, ສະໜັບສະໜູນ ໂຄງການອະນຸລັກຮັກສາມູນເຊື້ອວັດທະນະທຳລາວ ແລະ ໄດ້ມອບວັກຊີນຕ້ານພະຍາດໂຄວິດ-19 ໃຫ້ແກ່ ສປປ ລາວ.

ທ່ານ ປີເຕີ ເຮມອນ ໄດ້ສະແດງຄວາມຂອບໃຈ ມາຍັງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຂອບໃຈຕໍ່ລັດຖະບານ ສປປ ລາວ ທີ່ໄດ້ເອົາໃຈໃສ່ ໃຫ້ການຮ່ວມມືຊ່ວຍເຫຼືອ ໃນ ການປະຕິບັດໜ້າທີ່ການທູດຂອງຕົນຢູ່ ສປປລາວ ຕະຫຼອດໄລຍະເວລາຜ່ານມາ ແລະ ສະແດງຄວາມຫວັງວ່າ ລັດຖະບານ ສປປ ລາວ ຈະສືບຕໍ່ໃຫ້ການຮ່ວມມື ແກ່ທ່ານເອກອັກຄະລັດຖະທູດ ສະຫະລັດ ອາເມລິກາ ຄົນໃໝ່ ທີ່ຈະ ມາຮັບໜ້າທີ່ຕໍ່ໄປ ເພື່ອພ້ອມກັນສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນຮ່ວມມື ລະຫວ່າງ ສອງປະເທດທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການຂະຫຍາຍຕົວ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.

## 4. ຮອງຫົວໜ້າ ຄຕພ ໄດ້ໃຫ້ສໍາພາດ ນັກຂ່າວຈີນ ໃນໂອກາດຄົບຮອບ 10 ປີ



ວັນທີ 27 ກໍລະກົດ 2023, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ສໍາພາດຕໍ່ສໍານັກຂ່າວໜັງສືພິມປະຊາຊົນລາຍວັນຂອງ ສປ ຈີນ ໃນໂອກາດຄົບຮອບ 10 ປີ ຂອງຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ" ຂອງ ສປ ຈີນ, ຊຶ່ງ ສະຫາຍ ສົມພອນ ສີຈະເລີນ ໄດ້ກ່າວວ່າ ຂໍ້ລິເລີ່ມດັ່ງກ່າວ ແມ່ນຍຸດທະສາດທີ່ຜັນຂະຫຍາຍມາຈາກຂໍ້ລິເລີ່ມເສັ້ນທາງສາຍໄໝ, ເຊິ່ງໄດ້ປະຕິບັດ ແນວຄວາມຄິດການຮ່ວມມືແບບສັນຕິພາບ, ເປີດກວ້າງກາລະໂອກາດ, ແລກປ່ຽນຄວາມຮູ້ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ຕະຫຼອດໄລຍະ 10 ປີຜ່ານມາ ເຫັນວ່າການຮ່ວມມືພາຍໃຕ້ຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ ໄດ້ມີການເຄື່ອນໄຫວຢ່າງຫ້າວຫັນ ແລະ ກວ້າງຂວາງຢູ່ໃນເວທີສາກົນ ໂດຍສະເພາະ ສປ ຈີນ ໄດ້ມີການຮ່ວມມືກັບບັນດາປະເທດຕ່າງໆ ໃນການເສີມຂະຫຍາຍການຮ່ວມມືດັ່ງກ່າວ ໃຫ້ກ້າວສູ່ລວງເລິກເພື່ອລະກ້າວຕາມແຜນຍຸດທະສາດທີ່ວາງໄວ້. ສປປ ລາວ ເຊິ່ງເປັນໜຶ່ງໃນປະເທດ ທີ່ສະໜັບສະໜູນຂໍ້ລິເລີ່ມດັ່ງກ່າວ ແລະ ໄດ້ເຂົ້າຮ່ວມໃນ 08 ກົນໄກ ຈາກທັງໝົດ 11 ກົນໄກຮ່ວມມື ຂອງຂໍ້ລິເລີ່ມດັ່ງກ່າວ, ຜ່ານການຮ່ວມມືກັບ ສປ ຈີນ ໃນຂອບຂໍ້ລິເລີ່ມດັ່ງກ່າວ ໃນຕະຫຼອດ 10 ປີຜ່ານມານັ້ນ, ສປປ ລາວ ໄດ້ຮັບຜົນປະໂຫຍດທັງທາງກົງ ແລະ ທາງອ້ອມ, ບັນດາໂຄງການຮ່ວມມືຍຸດທະສາດຂະໜາດໃຫຍ່ຕ່າງໆ ທີ່ພວມຈັດຕັ້ງປະຕິບັດ ແລະ ບາງໂຄງການກໍ່ສໍາເລັດໄປແລ້ວນັ້ນ ໄດ້ເປັນການປະກອບສ່ວນສໍາຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທໍາ ແລະ ການຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນຢູ່ ສປປ ລາວ, ໂຄງການທາງ ລົດໄຟ ລາວ-ຈີນ ແມ່ນໂຄງການຍຸດທະສາດທີ່ກາຍເປັນສັນຍາລັກ ແລະ ເປັນແບບຢ່າງອັນດີ ໃນການຈັດຕັ້ງປະຕິບັດ ຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ", ຊ່ວຍເຮັດໃຫ້ ສປປ ລາວ ຫັນປ່ຽນຈາກປະເທດບໍ່ມີຊາຍແດນຕິດຈອດກັບທະເລ, ເປັນປະເທດເຊື່ອມໂຍງເຊື່ອມຈອດພາກພື້ນ, ສ້າງສະພາບແວດລ້ອມອັນດີໃຫ້ແກ່ການຄ້າ, ການທ່ອງທ່ຽວ ແລະ ການຂົນສົ່ງສິນຄ້າ ໂດຍຜ່ານການນໍາໃຊ້ເສັ້ນທາງລົດໄຟ ລາວ-ຈີນ ແລະ ໄດ້ປະກອບສ່ວນໃນການສ້າງວຽກເຮັດງານທໍາ ໃຫ້ແກ່ປະຊາຊົນ ໂດຍສະເພາະ ບັນດາແຂວງທີ່ເສັ້ນທາງລົດໄຟແລ່ນຜ່ານ.

## 5. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມໂຕະມົນ ຜ່ານວິດີໂອທາງໄກ




ວັນທີ 14 ກໍລະກົດ 2023, ຄະນະຜູ້ແທນພັກ ປປ ລາວ ນໍາໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມໂຕະມົນຜ່ານວິດີໂອທາງໄກ ພາຍໃຕ້ຫົວຂໍ້“ການພົວພັນແລກປ່ຽນ ລະຫວ່າງ ບັນດາອະລິຍະທໍາ: ບັນດາປະເທດຢູ່ພາຍໃນທະວີບ ແລະ ໝູ່ເກາະ” (Dialogue Between Civilizations: Continental and Insular) ໂດຍການເປັນເຈົ້າພາບຂອງພັກລັດເຊຍເອກະພາບ, ມີຄະນະຜູ້ແທນຈາກ 4 ພັກການເມືອງ ເຂົ້າຮ່ວມ ຄື: ພັກກອມມູນິດຫວຽດນາມ, ພັກປະຊາຊົນປະຕິວັດລາວ, ພັກປະຊາຊົນກໍາປູເຈຍ ແລະ ພັກໂກນກາຈາກອິນໂດເນເຊຍ. ກອງປະຊຸມຄັ້ງນີ້ ຈັດຂຶ້ນໂດຍຖືເປັນກິດຈະກໍາໜຶ່ງຂອງແນວຄິດລິເລີ່ມກໍາຈັດກາ (Kamchatka), ເຊິ່ງເປັນ “ເທດສະການມາຣາທອນ ກ່ຽວກັບ ວັດທະນະທໍາ” “Festival Marathon of culture” ຄັ້ງທີ 6. ຫົວໜ້າຄະນະຜູ້ແທນພັກ ປປ ລາວ ໄດ້ປະກອບຄໍາເຫັນໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວ ຂອງພັກລັດເຊຍເອກະພາບ; ສະແດງການສະໜັບສະໜູນແນວຄິດລິເລີ່ມຂອງບັນດາປະເທດເພື່ອນມິດ ທີ່ກ່ຽວຂ້ອງກັບການພົວພັນແລກປ່ຽນ ລະຫວ່າງ ບັນດາອະລິຍະທໍາ, ລວມທັງແນວຄິດລິເລີ່ມ ຂອງພັກລັດເຊຍເອກະພາບໃນຄັ້ງນີ້ ເພື່ອເສີມຂະຫຍາຍການແລກປ່ຽນລະຫວ່າງ ບັນດາປະເທດໃນທະວີບ ແລະ ໝູ່ເກາະຕ່າງໆ ໃນດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ການສຶກສາ, ວິທະຍາສາດ ແລະ ອື່ນໆ; ຍົກໃຫ້ເຫັນການພັດທະນາອະລິຍະທໍາຂອງພາກພື້ນອາຊີ-ປາຊີຟິກ ໃນຂອບອາຊຽນ ກໍຄື ອະລິຍະທໍາຂອງປະເທດລາວ ທີ່ໄດ້ຮັບການພັດທະນາມາແຕ່ສະໄໝບູຮານ, ເຊິ່ງຊາດລາວເປັນປະເທດໜຶ່ງທີ່ມີເອກະລັກສະເພາະ ແລະ ຄວາມອຸດົມສົມບູນທາງດ້ານວັດທະນະທໍາ. ພັກ ປປ ລາວ ຖືເອົາວັດທະນະທໍາເປັນພື້ນຖານແຫ່ງການຍືນຍົງຂອງຊາດ, ເປັນໜຶ່ງໃນກໍາລັງຊຸກດັນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ທັງແມ່ນຈຸດໝາຍຂອງການພັດທະນາ. ບົນພື້ນຖານດັ່ງກ່າວພັກ ປປ ລາວ ຍົກສູງວຽກງານວັດທະນະທໍາ ແລະ ວາງແນວທາງນະໂຍບາຍ ແລະ ຍຸດທະສາດເພື່ອອະນຸລັກ, ສົ່ງເສີມ ແລະ ພັດທະນາວັດທະນະທໍາຂອງຊາດ, ເສີມຂະຫຍາຍຄຸນຄ່າວັດທະນະທໍາທີ່ມີລັກສະນະຊາດ, ປະຊາຊົນ ແລະ ກ້າວໜ້າ ເພື່ອຮັບປະກັນຄວາມໝັ້ນຄົງ, ຄວາມຍຸຕິທໍາ ແລະ ຄວາມປອງດອງພາຍໃນຊາດ ແລະ ເຂົ້າຮ່ວມໃນການພັດທະນາວັດທະນະທໍາ ກໍຄື ອະລິ ຍະທໍາ ຂອງພາກພື້ນອາຊີ-ປາຊີຟິກ ແລະ ທະວີບອື່ນໆໃນໂລກ ໂດຍຮ່ວມກັນອະນຸລັກຮັກສາຈິດໃຈ ແລະ ຄວາມເປັນເອກະລັກຂອງພາກພື້ນ ແລະ ທະວີບຕ່າງໆ.